**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຜົ້ງສາລີ

ເຈົ້າແຂວງ

ເລກທີ 5723/ຈຂ.ຜລ

ຜົ້ງສາລີ, ວັນທີ 07 ທັນວາ 2021

# ຄຳສັ່ງ

## ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ

**ເຖິງ: ບັນດາທ່ານເຈົ້າເມືອງ, ຫົວໜ້າພະແນກ, ອົງການທຽບເທົ່າ, ກອງບັນຊາການປກຊ-ປກສ, ທະນາຄານ, ລັດວິສາຫະກິດ, ບໍລິສັດ ແລະ ປະຊາຊົນ ທົ່ວແຂວງຜົ້ງສາລີ.**

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີສະບັບເລກທີ 10/ນຍ, ລົງວັນທີ 1 ເມສາ 2016 ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ;
- ອີງຕາມ ໜັງສືສະເໜີຂອງພະແນກຍຸຕິທຳແຂວງສະບັບເລກທີ 518/ພຍຂ.ຜລ, ລົງວັນທີ 06 ກັນຍາ 2021.

ວຽກງານທະບຽນສານເປັນວຽກໜຶ່ງ ທີ່ມີພາລະບົດບາດສຳຄັນ ຂອງຂະແໜງຍຸຕິທຳໃນການຄົ້ນຄວ້າ, ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງ ຕາມຄວາມເປັນຈິງ ແລະ ຕາມກົດໝາຍຂອງສັນຍາ ແລະ ເອກະສານອື່ນໆ ແນໃສ່ເພີ່ມທະວີນິຕິທຳປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນໃນການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

ຜ່ານການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນສານ ທີ່ປະກາດໃຊ້ເປັນເວລາຫຼາຍປີ ເຫັນວ່າຄວາມຮັບຮູ້ເຂົ້າໃຈຂອງສັງຄົມຕໍ່ຄວາມໝາຍ, ຄວາມສຳຄັນ ໃນການນຳເອົາສັນຍາ ແລະ ເອກະສານຕ່າງໆ ໄປຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍນຳຂະແໜງທະບຽນສານ ແລະ ໜ່ວຍງານທະບຽນສານເມືອງ ຍັງມີບາງພາກສ່ວນຍັງບໍ່ທັນໄດ້ເອົາໃຈໃສ່ ແລະ ຍັງຖືເບົາຕໍ່ກັບວຽກງານດັ່ງກ່າວເປັນຕົ້ນແມ່ນ ການຕີກລົງບັນຫາທີ່ສຳຄັນຕ່າງໆ ບໍ່ເປັນລາຍລັກອັກສອນ, ການປະກອບເອກະສານ ຍັງບໍ່ໄປຕາມຂັ້ນຕອນ, ລະບຽບການ ຫຼື ສວຍໃຊ້ຊ່ອງຫວ່າງໃນການສ້າງສັນຍາມີການເອົາປຽບເຊິ່ງກັນ ແລະ ກັນ ພ້ອມກັນນັ້ນ, ຍັງມີຫຼາຍພາກສ່ວນ ບໍ່ນຳເອົາສັນຍາ ແລະ ເອກະສານຕ່າງໆ ມາຢັ້ງຢືນຄວາມຖືກຕ້ອງນຳອົງການທະບຽນສານ ເຊິ່ງພາໃຫ້ເກີດມີຫຼາຍສັນຍາ ຫລື ຫຼາຍເອກະສານບໍ່ຖືກຕ້ອງເປັນສາຍເຫດພາໃຫ້ມີຂໍ້ຂັດແຍ່ງໃນເວລາຈັດຕັ້ງປະຕິບັດການແກ້ໄຂບັນຫາຂອງພາກສ່ວນທີ່ກ່ຽວຂ້ອງພົບຄວາມຫຍຸ້ງຍາກ ແລະ ບໍ່ສາມາດຈັດຕັ້ງປະຕິບັດໄດ້.

ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈຂອງສັງຄົມ ແລະ ທັງເປັນການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານໃຫ້ໄດ້ຮັບການຈັດຕັ້ງປະຕິບັດເປັນເອກະພາບໃນທົ່ວແຂວງຜົ້ງສາລີ ທັງເປັນການຍົກສູງຄຸນນະພາບຂອງສັນຍາ ແລະເອກະສານ ອື່ນໆ ໃຫ້ມີຄຸນຄ່າທາງດ້ານກົດໝາຍເປັນຫຼັກຖານໃຫ້ແກ່ການພິຈາລະນາຄະດີຂອງສານ, ການໄກ່ເກ່ຍຂໍ້ຂັດແຍ່ງ, ຮັບປະກັນປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຮັບປະກັນໃຫ້ສັງຄົມມີຄວາມສະຫງົບເປັນລະບຽບຮຽບຮ້ອຍ, ມີຄວາມຍຸຕິທຳ ແລະ ປະກົດການຫຍໍ້ທໍ້ໃນສັງຄົມຫຼຸດໜ້ອຍຖອຍລົງເປັນກ້າວໆ.

## ເຈົ້າແຂວງ ອອກຄຳສັ່ງ:

1. ໃຫ້ບັນດາ ພະແນກການ, ອົງການທຽບເທົ່າ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ກອງບັນຊາການ ປກຊ-ປກສ, ບັນດາທ່ານເຈົ້າເມືອງ, ເລຂາທິການສະພາປະຊາຊົນແຂວງ, ລັດວິສາຫະກິດ, ຕະຫຼອດຮອດພໍ່ແມ່ປະຊາຊົນພາຍໃນແຂວງຜົ້ງສາລີ ແລະ ພົນລະເມືອງທຸກຄົນນຳສັນຍາ ແລະ ເອກະສານຕ່າງໆໄປຢັ້ງຢືນຄວາມຖືກຕ້ອງ ທາງດ້ານກົດໝາຍຢູ່ພະແນກຍຸຕິທຳແຂວງ (ຂະແໜງທະບຽນສານ) ຫຼື ຫ້ອງການຍຸຕິທຳເມືອງ (ໜ່ວຍງານທະບຽນສານເມືອງ) ຈຶ່ງຖືວ່າເປັນສັນຍາ ຫຼື ເອກະສານທີ່ຖືກຕ້ອງສອດຄອງ ແລະ ມີຄຸນຄ່າທາງດ້ານກົດໝາຍ ເປັນຕົ້ນແມ່ນ:
   - 1.1 ສັນຍາປະເພດຕ່າງໆ ເຊັ່ນ: ສັນຍາສຳປະທານ, ສັນຍາຮັບເໝົາກໍ່ສ້າງ, ສັນຍາຊື້-ຂາຍ, ສັນຍາກູ້ຢືມເງິນ, ສັນຍາເຊົ່າ, ສັນຍາຂົນສົ່ງ, ສັນຍາຮຸ້ນສ່ວນ, ສັນຍາມອບຊັບ, ສັນຍາແຮງງານ ແລະ ອື່ນໆ;
   - 1.2 ສັນຍາ ແລະ ນິຕິກຳການປ່ຽນແປງສິດນຳໃຊ້ທີ່ດິນ ແລະ ການເຄື່ອນໄຫວສິດໃຊ້ທີ່ດິນເຊັ່ນ: ການສືບທອດມູນມໍລະດົກຕາມກົດໝາຍ ແລະ ຕາມພິໄນກຳ, ສັນຍາຊື້-ຂາຍສິດນຳໃຊ້ທີ່ດິນ, ສັນຍາແລກປ່ຽນ, ສັນຍາຂາຍຝາກ, ການນຳໃຊ້ທີ່ດິນ ແລະ ເຮືອນເປັນຮຸ້ນຕາມສັນຍາ, ການເໝົາຊື້ຊັບສິ່ງຂອງດ້ວຍຄວາມຈຳເປັນ, ການຮິບຊັບສິ່ງຂອງ, ການມອບຊັບ-ຍຶກຊັບ ( ກ່ຽວກັບທີ່ດິນ ), ສັນຍາເຊົ່າ, ສັນຍາຄ້ຳປະກັນ, ການສືບທອດສິດ (ໃນການເຊົ່າ, ສັນຍາຄ້ຳປະກັນ, ສັນຍາຂາຍຝາກ), ຄຳສັ່ງປະຕິບັດຄຳຕັດສິນຂອງສານ ແລະ ອື່ນໆ;
   - 1.3 ພິໄນກຳ, ກຳມະສິດກ່ຽວກັບສິນສົມສ້າງ ຫຼື ຊັບເດີມຂອງຄູ່ຜົວ-ເມຍ, ເອກະສານສຳເນົາ, ລາຍເຊັນ ຫຼື ລາຍໂປ້ມື, ການແປພາສາ, ຕົວບຸກຄົນທຽບກັບຮູບຖ່າຍ, ວັນເດືອນປີຍື່ນເອກະສານ, ການຮັບເອກະສານທີ່ກ່ຽວຂ້ອງກັບການຢັ້ງຢືນ, ເອກະສານອື່ນໆ;
2. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳເອົາສັນຍາ ແລະ ເອກະສານຕ່າງໆ ມາຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍຈາກອົງການທະບຽນສານນັ້ນ, ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການຕາມກົດໝາຍວ່າດ້ວຍທະບຽນສານ ແລະ ລັດຖະບັນຍັດຂອງປະທານປະເທດທີ່ປະກາດໃຊ້ໃນແຕ່ລະໄລຍະ;
3. ພະແນກຍຸຕິທຳແຂວງ ກໍ່ຄືຫ້ອງການຍຸຕິທຳເມືອງໃນທົ່ວແຂວງ ຕ້ອງເພີ່ມທະວີຄວາມເອົາໃຈໃສ່ ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍທະບຽນສານ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານທະບຽນສານໃຫ້ກວ້າງຂວາງ ແລະ ເລິກເຊິ່ງພ້ອມທັງເປັນເຈົ້າການຕິດຕາມຊຸກຍູ້, ກວດກາ ແລະ ປະສານສົມທົບກັບບັນດາຂະແໜງການ ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ແລ້ວລາຍງານໃຫ້ແຂວງຢ່າງເປັນປົກກະຕິເພື່ອຊາບ ແລະ ມີທິດຊີ້ນຳ;
4. ໃຫ້ບັນດາທ່ານເຈົ້າເມືອງ, ພະແນກການ, ອົງການທຽບເທົ່າ, ກອງບັນຊາການປກຊ - ປກສ, ທະນາຄານ, ລັດວິສາຫະກິດບໍລິສັດ ແລະ ພົນລະເມືອງທຸກຄົນຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ;
5. ຄຳສັ່ງສະບັບນີ້ປ່ຽນແທນຄຳສັ່ງເຈົ້າແຂວງສະບັບເລກທີ 07/ຈຂ, ລົງວັນທີ 23 ກັນຍາ 2011 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

**ເຈົ້າແຂວງ,**

ແຂວງຜົ້ງສາລີ

ເຈົ້າແຂວງ

ຄຳຜອຍ ວັນນະສານ